สาละบาน


ມະຕິຕົກລົງ ..... 3
ລັດຖະດຳລັດ ..... 4
ກົດໝາຍ ວ່າດ້ວຍ ຊັບສິນຂອງລັດ ..... 5
ໝວດທີ 1 ບົດບັນຍັດທົ່ວໄປ ..... 5
ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ..... 5
ມາດຕາ 2: ຊັບສິນຂອງລັດ ..... 5
ມາດຕາ 3: ການໄດ້ມາ ຂອງຊັບສິນຂອງລັດ ..... 5
ມາດຕາ 4: ການຖືກຳມະສິດ ກ່ຽວກັບຊັບສິນຂອງລັດ ..... 6
ມາດຕາ 5: ການປົກປ້ອງສິດໃນການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ..... 6
ໝວດທີ 2 ປະເພດ ຊັບສິນຂອງລັດ ..... 6
ມາດຕາ 6: ປະເພດ ຊັບສິນຂອງລັດ ..... 6
ມາດຕາ 7: ສາທາລະນະສົມບັດ ..... 6
ມາດຕາ 8: ລັດຖະສົມບັດ ..... 6
ໝວດທີ 3 ການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ..... 7
ມາດຕາ 9: ການຄຸ້ມຄອງຊັບສິນຂອງລັດ ..... 7
ມາດຕາ 10: ການຂຶ້ນບັນຊີຊັບສິນຂອງລັດ ..... 7
ມາດຕາ 11: ການຂຶ້ນທະບຽນຊັບສິນຂອງລັດ ..... 7
ມາດຕາ 12: ເນື້ອໃນການຂຶ້ນທະບຽນ ..... 7
ມາດຕາ 13: ການນຳໃຊ້ຊັບສິນຂອງລັດ ..... 8
ມາດຕາ 14: ການປ່ຽນແປງສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ..... 8
ໝວດທີ 4 ການປົກປັກຮັກສາ ແລະ ການພັດທະນາ ຊັບສິນຂອງລັດ ..... 8
ມາດຕາ 15: ການປົກປັກຮັກສາ ຊັບສິນຂອງລັດ ..... 8
ມາດຕາ 16: ການຂຶ້ນແຜນປົກປັກຮັກສາ, ບູລະນະ ແລະ ສ້ອມແປງຊັບສິນຂອງລັດ ..... 9
ມາດຕາ 17: ການພັດທະນາຊັບສິນຂອງລັດ ..... 9
ມາດຕາ18. ການຂຶ້ນແຜນພັດທະນາຊັບສິນຂອງລັດ ..... 9
ໝວດທີ 5 ການກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ..... 9
ມາດຕາ 19: ອົງການກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ..... 9
ມາດຕາ 20: ສິດ ແລະ ໜ້າທີ່ຂອງກະຊວງການເງິນ ..... 10
ມາດຕາ 21: ສິດ ແລະ ໜ້າທີ່ຂອງກະຊວງ, ອົງການທຽບເທົ່າກະຊວງ, ອຳນາດການປົກຄອງທ້ອງຖິ່ນ ທຸກຂັ້ນ ແລະ ອົງການຈັດຕັ້ງທີ່ນຳໃຊ້ງົບປະມານຂອງລັດ. ..... 10
ມາດຕາ 22: ການກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ..... 10
ມາດຕາ 23: ປະເພດການກວດກາຊັບສິນຂອງລັດ ..... 11
ມາດຕາ 24: ເນື້ອໃນຂອງການກວດກາ ..... 11

ໝວດທີ 6 ການແກ້ໄຂຂໍ້ຂັດແຍ່ງ, ນະໂຍບາຍຕໍ່ຜູ້ມີຜົນງານແລະ ມາດຕະການຕໍ່ຜູ້ລະເມີດ ...............11
ມາດຕາ 25. ການແກ້ໄຂຂໍ້ຂັດແຍ່ງ ...............................................................................11
ມາດຕາ26: ນະໂຍບາຍຕໍ່ຜູ້ມີຜົນງານ ..........................................................................12
ມາດຕາ 27: ມາດຕະການຕໍ່ຜູ້ລະເມີດ ..........................................................................12
ມາດຕາ 28: ມາດຕະການຕັກເຕືອນ ແລະ ສຶກສາອົບຮົມ ....................................................12
ມາດຕາ 29: ມາດຕະການໃຊ້ແທນຄ່າເສຍຫາຍ .................................................................12
ມາດຕາ 30: ມາດຕະການທາງອາຍາ ..............................................................................12
ໝວດທີ 7 ບົດບັນຍັດສຸດທ້າຍ ........................................................................................13
ມາດຕາ 31: ການຈັດຕັ້ງປະຕິບັດ ..................................................................................13
ມາດຕາ 32: ຜົນສັກສິດ ..............................................................................................13

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 72 /ສພຊ
ວຽງຈັນ, ວັນທີ 12 ຕຸລາ 2002

# ມະຕິຕົກລົງ

**ຂອງສະພາແຫ່ງຊາດ**
**ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍຊັບສິນຂອງລັດ**

-------------------------

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 2 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ອີງຕາມການສະເໜີຂອງນາຍົກລັດຖະມົນຕີສະບັບເລກທີ 49/ນຍ, ລົງວັນທີ 15/7/2002.

ພາຍຫລັງທີ່ໄດ້ຄົ້ນຄ້ວາພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ຊັບສິນຂອງລັດ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດ V ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 12 ຕຸລາ 2002.

**ກອງປະຊຸມໄດ້ຕົກລົງ:**

ມາດຕາ 1: ຮັບຮອງເອົາກົດໝາຍວ່າດ້ວຍຊັບສິນຂອງລັດ ດ້ວຍຄະແນນສຽງສ່ວນຫລາຍເຫັນດີ.

ມາດຕາ 2: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 63 / ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຊັບສິນຂອງລັດ

-——-——-——-——-——-

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໝວດທີ V ມາດຕາ 53, ຂໍ້ 1 ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 72 / ສພຊ, ລົງວັນທີ 12 ຕຸລາ 2002 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັບສິນຂອງລັດ ໃນກອງປະຊຸມສະໄໝສະມັນເທື່ອທີ 2 ຊຸດທີ V.
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ນຍ ລົງວັນທີ 14 ຕຸລາ 2002.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍ ຊັບສິນຂອງລັດ.

ມາດຕາ 2: ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 15 ຕຸລາ 2002
ປະທານປະເທດ ແຫ່ງ ສປປລາວ
ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

———————————

ສະພາແຫ່ງຊາດ ເລກທີ 09/ສພຊ

ວຽງຈັນ, ວັນທີ 12/10/2002

# ກົດໝາຍ ວ່າດ້ວຍ ຊັບສິນຂອງລັດ

## ໝວດທີ 1 ບົດບັນຍັດທົ່ວໄປ

### ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ

ກົດໝາຍວ່າດ້ວຍຊັບສິນຂອງລັດ ມີໜ້າທີ່ກຳນົດ: ປະເພດ, ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ ແລະ ການພັດທະນາຊັບສິນຂອງລັດ ໃຫ້ມີປະສິດທິຜົນ, ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ, ລະບຽບກົດໝາຍ ເພື່ອແນໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

### ມາດຕາ 2: ຊັບສິນຂອງລັດ

ຊັບສິນຂອງລັດ ແມ່ນຊັບສົມບັດທີ່ເກີດຂຶ້ນຕາມທຳມະຊາດ ຫລື/ແລະ ດ້ວຍການສ້າງຂຶ້ນຂອງຄົນ ຊຶ່ງວົງຄະນະຍາດແຫ່ງຊາດເປັນເຈົ້າກຳມະສິດ, ປະກອບດ້ວຍສັງຫາລິມະຊັບ (ຊັບເຄື່ອນທີ່) ແລະ ອະສັງຫາລິມະຊັບ (ຊັບຄົງທີ່) ທີ່ມີຢູ່ໜ້າດິນ, ໃຕ້ດິນ, ໜ້ານ້ຳ, ໃຕ້ນ້ຳ ແລະ ນ່ານຟ້າ ໃນຂອບເຂດພື້ນແຜ່ນດິນຂອງ ສ ປປ ລາວ ລວມທັງຊັບສົມບັດຕ່າງໆຂອງລັດ ສ ປປ ລາວ ທີ່ມີຢູ່ຕ່າງປະເທດ.

### ມາດຕາ 3: ການໄດ້ມາ ຂອງຊັບສິນຂອງລັດ

ຊັບສິນຂອງລັດ ທີ່ໄດ້ມາຈາກການເກີດຂຶ້ນຕາມທຳມະຊາດມີ: ດິນ, ດອນ, ພູ, ຜາ, ປ່າໄມ້, ບໍ່ແຮ່, ແຫລ່ງນ້ຳ, ສັດປ່າ, ສັດນ້ຳ ແລະ ຊັບພະຍາກອນທຳມະຊາດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຊັບສິນຂອງລັດ ທີ່ໄດ້ມາຈາກການສ້າງຂຶ້ນຂອງຄົນມີ:

1. ຊັບສິນທີ່ເປັນມູນມໍລະດົກຂອງຊາດ ແລະ ວັດຖຸບູຮານ;

2. ຊັບສິນທີ່ກຳເນີດຈາກງົບປະມານຂອງລັດ, ການເກັບພາສີ, ອາກອນ, ຄ່າທຳນຽມ, ເງິນປັນຜົນ, ການແລກປ່ຽນ, ການຊ່ວຍເຫລືອ, ການມອບກຳມະສິດໃຫ້ລັດ, ການໂອນຄືນເປັນກຳມະສິດ

ຂອງລັດ, ການຮິບຊັບຕາມການຕັດສິນຂອງສານ, ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ແລະ ມູນມໍລະດົກທີ່ບໍ່ມີຜູ້ສືບທອດ ລວມທັງຊັບສິນທີ່ຕົກເປັນກຳມະສິດຂອງລັດດ້ວຍຮູບການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 4: ການຖືກຳມະສິດ ກ່ຽວກັບຊັບສິນຂອງລັດ

ຊັບສິນຂອງລັດ ແຫ່ງ ສ ປປ ລາວ ເປັນກຳມະສິດຂອງວົງຄະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງ ຢ່າງລວມສູນເປັນເອກະພາບ ໂດຍລັດມອບໃຫ້ອົງການຈັດຕັ້ງ ຫລື ບຸກຄົນຄຸ້ມຄອງ, ນຳໃຊ້, ໃຫ້ເຊົ່າ ຫລື ສຳປະທານ, ປົກປັກຮັກສາ ແລະ ພັດທະນາແບບຍືນຍົງ ຕາມລະບຽບກົດໝາຍ.

### ມາດຕາ 5: ການປົກປ້ອງສິດໃນການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ

ລັດປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງອົງການຈັດຕັ້ງ ຫລື ບຸກຄົນ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

## ໝວດທີ 2 ປະເພດ ຊັບສິນຂອງລັດ

### ມາດຕາ 6: ປະເພດ ຊັບສິນຂອງລັດ

ຊັບສິນຂອງລັດແຫ່ງ ສ ປປ ລາວ ແບ່ງອອກເປັນສອງປະເພດຄື: ສາທາລະນະສົມບັດ ແລະ ລັດຖະສົມບັດ.

ລັດເປັນຜູ້ກຳນົດຊັບສິນຂອງລັດປະເພດໃດໜຶ່ງ ໃຫ້ເປັນສາທາລະນະສົມບັດ ຫລື ລັດຖະສົມບັດ ຕາມຄວາມຮຽກຮ້ອງຕ້ອງການຂອງການນຳໃຊ້ໃນແຕ່ລະໄລຍະ ໂດຍສອດຄ່ອງກັບລະບຽບກົດໝາຍ.

### ມາດຕາ 7: ສາທາລະນະສົມບັດ

ສາທາລະນະສົມບັດ ແມ່ນຊັບສິນຕ່າງໆ ຂອງລັດທີ່ມີລັກສະນະທຳມະຊາດ ແລະ ຊັບສິນຂອງລັດ ທີ່ອົງການຈັດຕັ້ງ ຫລື ບຸກຄົນສ້າງຂຶ້ນເພື່ອໃຫ້ສາທາລະນະຊົນນຳໃຊ້ ຫລື ເພື່ອໃຫ້ການບໍລິການແກ່ສາທາລະນະຊົນ ລວມທັງຊັບສິນທີ່ຕົກເປັນສາທາລະນະສົມບັດຕາມລະບຽບກົດໝາຍ.

### ມາດຕາ 8: ລັດຖະສົມບັດ

ລັດຖະສົມບັດ ແມ່ນຊັບສິນຂອງລັດທີ່ບໍ່ນອນຢູ່ໃນສາທາລະນະສົມບັດ ຊຶ່ງປະກອບດ້ວຍສັງຫາລິມະຊັບ ແລະ ອະສັງລິມະຊັບ ທີ່ລັດມອບໃຫ້ອົງການຈັດຕັ້ງ ແລະ ບຸກຄົນເປັນຜູ້ຄຸ້ມຄອງ ແລະ ນຳໃຊ້.

## ໝວດທີ 3 ການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ

### ມາດຕາ 9: ການຄຸ້ມຄອງຊັບສິນຂອງລັດ

ລັດຖະບານ ແຫ່ງ ສ ປປ ລາວ ຄຸ້ມຄອງຊັບສິນຂອງລັດທັງຢູ່ພາຍໃນ ແລະ ຕ່າງປະເທດລວມສູນເປັນເອກະພາບ. ລັດຖະບານມອບໃຫ້ກະຊວງ, ອົງການທຽບເທົ່າກະຊວງ, ອຳນາດການປົກຄອງ ແລະ ອົງການຈັດຕັ້ງທີ່ນຳໃຊ້ງົບປະມານຂອງລັດ ຄຸ້ມຄອງ ແລະ ນຳໃຊ້.

ລັດຖະບານມອບສິດໃຫ້ກະຊວງການເງິນ ເປັນຜູ້ຕາງໜ້າໃນການຄຸ້ມຄອງລວມສູນດ້ວຍການຂຶ້ນບັນຊີ, ຂຶ້ນທະບຽນ ແລະ ອອກລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ, ສຳລັບຊັບສິນຂອງລັດທີ່ຈະນຳໃຊ້, ມອບ-ໂອນ,ໃຫ້ເຊົ່າ ຫລື ສຳປະທານ, ເອົາເຂົ້າຮຸ້ນ ຫລື ຮ່ວມທຶນນັ້ນ ແມ່ນລັດຖະບານເປັນຜູ້ຕົກລົງ. ຖ້າຫາກແມ່ນຊັບສິນທີ່ມີມູນຄ່າສູງ ຫລື ຂະໜາດໃຫຍ່ຕ້ອງໄດ້ຮັບຮອງເອົາຈາກສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 10: ການຂຶ້ນບັນຊີຊັບສິນຂອງລັດ

ກະຊວງ, ອົງການທຽບເທົ່າກະຊວງ, ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ອົງການຈັດຕັ້ງ ທີ່ນຳໃຊ້ງົບປະມານຂອງລັດ ແຕ່ສູນກາງລົງຮອດທ້ອງຖິ່ນ ຕ້ອງໄດ້ຂຶ້ນບັນຊີຊັບສິນທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນຳໃຊ້ຂອງຕົນ ແລ້ວນຳໄປຂຶ້ນບັນຊີລວມສູນຢູ່ຂະແໜງການເງິນຂັ້ນຂອງຕົນຕາມລະບຽບກົດໝາຍ.

### ມາດຕາ 11: ການຂຶ້ນທະບຽນຊັບສິນຂອງລັດ

ກະຊວງ, ອົງການທຽບເທົ່າກະຊວງ, ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ອົງການຈັດຕັ້ງທີ່ນຳໃຊ້ງົບປະມານຂອງລັດ ແຕ່ສູນກາງລົງຮອດທ້ອງຖິ່ນ ຕ້ອງໄດ້ນຳບັນຊີຊັບສິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນຳໃຊ້ຂອງຕົນ ໄປຂຶ້ນທະບຽນລວມສູນ ຢູ່ຂະແໜງການເງິນຂັ້ນຂອງຕົນ ຕາມລະບຽບກົດໝາຍ.

ຊັບສິນຂອງລັດທີ່ຕ້ອງຂຶ້ນທະບຽນມີ: ທີ່ດິນ, ເຄຫະສະຖານ, ວັດຖຸບູຮານ, ພາຫະນະກົນຈັກ, ພາຫະນະຂົນສົ່ງ ແລະ ຊັບສິນອື່ນໆ ທີ່ມີມູນຄ່າສູງ ຊຶ່ງລາຍລະອຽດລັດຖະບານຈະເປັນຜູ້ກຳນົດ.

ໃນກໍລະນີທີ່ມີການມອບ-ໂອນຊັບສິນຂອງເອກະຊົນ ມາເປັນຊັບສິນຂອງລັດ ຫລື ລະຫວ່າງອົງການຈັດຕັ້ງຂອງລັດດ້ວຍກັນ ຫລື ຂອງລັດໄປເປັນຂອງເອກະຊົນນັ້ນ ທຸກພາກສ່ວນທີ່ກ່ຽວຂ້ອງຕ້ອງເອົາສັນຍາມອບ-ໂອນ ພ້ອມດ້ວຍເອກະສານອື່ນໆ ກ່ຽວກັບຊັບສິນດັ່ງກ່າວໄປຈົດທະບຽນໂອນກຳມະສິດ ໃຫ້ຖືກຕ້ອງຕາມກົດໝາຍ.

### ມາດຕາ 12: ເນື້ອໃນການຂຶ້ນທະບຽນ

ການຂຶ້ນທະບຽນຊັບສິນຂອງລັດ ຕ້ອງໄດ້ກຳນົດແຈ້ງກ່ຽວກັບຊື່, ເຄື່ອງໝາຍຊັບສິນ, ຈຸດພິເສດທາງດ້ານເຕັກນິກ, ມູນຄ່າ, ການໄດ້ມາ, ຈຸດປະສົງຂອງການນຳໃຊ້ ແລະ ເວລາທີ່ເລີ້ມນຳໃຊ້. ຖ້າຫາກແມ່ນທີ່ດິນ ຫລື ເຮືອນ ໃຫ້ກຳນົດທີ່ຕັ້ງ, ລັກສະນະ ແລະ ເນື້ອທີ່.

### ມາດຕາ 13: ການນຳໃຊ້ຊັບສິນຂອງລັດ

ການນຳໃຊ້ຊັບສິນຂອງລັດ ແມ່ນໃຫ້ປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍຂອງແຕ່ລະປະເພດຊັບສິນຂອງລັດດັ່ງນີ້:

ການນຳໃຊ້ສາທາລະນະສົມບັດ ແມ່ນເພື່ອຈຸດປະສົງຮັບໃຊ້ສາທາລະນະຊົນ. ອົງການຈັດຕັ້ງ ຫລື ບຸກຄົນ ສາມາດໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ສາທາລະນະສົມບັດ ດ້ວຍການເຊົ່າ ຫລື ສຳປະທານຕາມລະບຽບກົດໝາຍ. ຫ້າມເອົາສາທາລະນະສົມບັດເປັນສິນຄ້າ ຫລື ເປັນກຳມະສິດສ່ວນຕົວ, ບໍ່ໃຫ້ຍຶດ ຫລື ຮິບ. ສາທາລະນະສົມບັດບໍ່ມີອາຍຸຄວາມໃນການຮ້ອງຟ້ອງ.

ການນຳໃຊ້ລັດຖະສົມບັດ ແມ່ນເພື່ອຈຸດປະສົງຮັບໃຊ້ວຽກງານບໍລິຫານ-ວິຊາການ ແລະ ການລົງທຶນຂອງລັດ ຊຶ່ງສາມາດໂອນສິດຄຸ້ມຄອງ ແລະ ນຳໃຊ້, ໂອນກຳມະສິດ, ຫັນເປັນສິນຄ້າ, ຖືກຍຶດ, ອາຍັດ ຫລື ຮິບໄດ້ ແລະ ມີອາຍຸຄວາມໃນການຮ້ອງຟ້ອງຕາມລະບຽບກົດໝາຍ.

ການນຳໃຊ້ຊັບສິນຂອງລັດແຕ່ລະປະເພດ ຕ້ອງໃຫ້ຖືກຕາມຈຸດປະສົງ ແລະ ເປົ້າໝາຍຢ່າງມີການປະຢັດ, ຫ້າມນຳໃຊ້ຊັບສິນຂອງລັດ ເພື່ອຜົນປະໂຫຍດສ່ວນຕົວ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 14: ການປ່ຽນແປງສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ

ອົງການຈັດຕັ້ງ ຫລື ບຸກຄົນທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ລວມທັງຊັບສິນຂອງໂຄງການຕ່າງໆ ທີ່ລັດໄດ້ຮັບການຊ່ວຍເຫລືອຈາກພາຍໃນ ຫລື ຕ່າງປະເທດ ພາຍຫລັງທີ່ໄດ້ສິ້ນສຸດ, ໝົດໜ້າທີ່ ຫລື ໄດ້ປະຕິບັດໂຄງການສຳເລັດແລ້ວ ຕ້ອງສົ່ງ-ມອບຊັບສິນທັງໝົດນັ້ນຄືນໃຫ້ລັດໂດຍແມ່ນກະຊວງການເງິນ, ພະແນກການເງິນ ຫລື ຫ້ອງການການເງິນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງກວດກາ, ຕີລາຄາ, ຂຶ້ນບັນຊີ, ຮັບ-ມອບ ຫລື ຖອນຄືນ.

ໃນກໍລະນີທີ່ຈະມີການຮື້ຖອນ, ສ້ອມແປງ ຫລື ປຸກສ້າງຂຶ້ນໃໝ່ນັ້ນ ຕ້ອງໄດ້ຜ່ານການກວດກາ ແລະ ເຫັນດີຈາກອົງການທີ່ກ່ຽວຂ້ອງ, ກະຊວງການເງິນ, ພະແນກການເງິນ ຫລື ຫ້ອງການການເງິນເສຍກ່ອນ. ສຳລັບວັດຖຸທີ່ຍັງມີຄ່າຈາກການມ້າງ ຫລື ຮື້ຖອນນັ້ນ ຕ້ອງໄດ້ຜ່ານການປະມູນຂາຍອອກ ແລ້ວມອບເງິນເຂົ້າງົບປະມານຂອງລັດໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

## ໝວດທີ 4 ການປົກປັກຮັກສາ ແລະ ການພັດທະນາ ຊັບສິນຂອງລັດ

### ມາດຕາ 15: ການປົກປັກຮັກສາ ຊັບສິນຂອງລັດ

ອົງການຈັດຕັ້ງ ຫລື ບຸກຄົນ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ມີພັນທະໃນການປົກປັກຮັກສາ, ສ້ອມແປງໃຫ້ຢູ່ໃນສະພາບທີ່ດີ, ບໍ່ໃຫ້ຕົກເຮ່ຍເສຍຫາຍ, ຕ້ອງຮັກສາປະລິມານ ແລະ ຄຸນນະພາບໃຫ້ເໝາະສົມ ຕາມມາດຕະຖານເຕັກນິກ ຂອງແຕ່ລະປະເພດຊັບສິນ.

ຊັບສິນຂອງລັດທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງອົງການຈັດຕັ້ງ ຫລື ບຸກຄົນຫາກເປ່ເພ, ເຊື່ອມຄຸນໃຊ້ການບໍ່ໄດ້ ຫລື ບໍ່ຕ້ອງການນຳໃຊ້ແລ້ວນັ້ນ ໃຫ້ຈັດຕັ້ງປະມູນຂາຍອອກ ໂດຍໄດ້ຮັບການເຫັນດີຈາກອຳນາດການປົກຄອງ ແລະ ພະແນກການເງິນຂັ້ນຂອງຕົນ.

ສຳລັບການພົບເຫັນວັດຖຸສິ່ງຂອງທີ່ມີຄ່າຢູ່ໜ້າດິນ, ໃຕ້ດິນ, ໜ້ານ້ຳ, ໃຕ້ນ້ຳ, ຊັບສິ່ງຂອງຕົກເຮ່ຍທີ່ບໍ່ມີເຈົ້າຂອງ, ຊັບສິນທີ່ຖືກຢຶດ, ຮິບ ຫລື ຖອນຄືນ ຊຶ່ງໄດ້ກຳນົດເປັນຊັບສິນຂອງລັດ ຕາມກົດໝາຍວ່າດ້ວຍກຳມະສິດນັ້ນ ຖ້າວ່າຊັບສິນດັ່ງກ່າວຫາກເປັນປະເພດສິນຄ້າ ແລະ ວັດຖຸທີ່ເຊື່ອມຄຸນ ຫລື ເປ່ເພໄວ ອົງການທີ່ຕົກລົງຖອນຄືນ, ອົງການປະຕິບັດຄຳຕັດສິນຂອງສານ ຫລື ອົງການທີ່ໄດ້ຮັບສິດຄຸ້ມຄອງຊັບສິນດັ່ງກ່າວ ຕ້ອງຂຶ້ນບັນຊີ ແລະ ປະເມີນລາຄາແລ້ວຈັດຕັ້ງການປະມູນຂາຍຢ່າງຮີບດ່ວນ. ລາຍຮັບທີ່ໄດ້ຈາກການປະມູນຂາຍຊັບສິນຂອງລັດ ຕ້ອງໄດ້ມອບເຂົ້າງົບປະມານຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 16: ການຂຶ້ນແຜນປົກປັກຮັກສາ, ບູລະນະ ແລະ ສ້ອມແປງຊັບສິນຂອງລັດ

ອົງການຈັດຕັ້ງ ຫລື ບຸກຄົນທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ໃນຂົງເຂດບໍລິຫານ-ວິຊາການ ມີໜ້າທີ່ຂຶ້ນແຜນປົກປັກຮັກສາ, ບູລະນະ ແລະ ສ້ອມແປງຊັບສິນຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນຳໃຊ້ຂອງຕົນ ແລ້ວນຳສະເໜີຂໍການຕົກລົງຈາກອຳນາດການປົກຄອງຂັ້ນຂອງຕົນ ເພື່ອເອົາເຂົ້າແຜນງົບປະມານຕາມລະບຽບກົດໝາຍ.

### ມາດຕາ 17: ການພັດທະນາຊັບສິນຂອງລັດ

ລັດຊຸກຍູ້ ແລະ ສົ່ງເສີມການພັດທະນາຊັບສິນຂອງລັດ ດ້ວຍການວາງນະໂຍບາຍ, ລະບຽບການ, ວິທີການ ແລະ ມາດຕະການຕ່າງໆ ໃຫ້ເໝາະສົມກັບແຕ່ລະປະເພດ ແລະ ລັກສະນະຂອງຊັບສິນ.

ອົງການຈັດຕັ້ງ ຫລື ບຸກຄົນ ທີ່ນຳໃຊ້ຊັບສິນຂອງລັດ ມີພັນທະໃນການພັດທະນາຊັບສິນດັ່ງກ່າວ ໃຫ້ມີຄຸນນະພາບດີ, ອຸດົມສົມບູນ ແລະ ຍືນຍົງ ແນໃສ່ຮັບ ໃຊ້ຜົນປະໂຫຍດລວມຂອງຊາດຢ່າງຍາວນານ.

### ມາດຕາ18. ການຂຶ້ນແຜນພັດທະນາຊັບສິນຂອງລັດ

ອົງການຈັດຕັ້ງ ຫລື ບຸກຄົນທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ໃນຂົງເຂດບໍລິຫານ-ວິຊາການ ມີໜ້າຂຶ້ນແຜນພັດທະນາຊັບສິນຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນຳໃຊ້ຂອງຕົນ ແລ້ວນຳສະເໜີຂໍການຕົກລົງຈາກອຳນາດການປົກຄອງຂັ້ນຂອງຕົນ ເພື່ອເອົາເຂົ້າແຜນງົບປະມານ ຕາມລະບຽບກົດໝາຍ.

## ໝວດທີ 5 ການກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ

### ມາດຕາ 19: ອົງການກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ

ອົງການກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ປະກອບມີ :

1. ກະຊວງການເງິນ ຊຶ່ງລັດຖະບານໄດ້ມອບສິດໃຫ້ເປັນຜູ້ຕາງໜ້າໃນການກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ລວມສູນເປັນເອກະພາບໃນທົ່ວປະເທດ.

2. ກະຊວງ, ອົງການທຽບເທົ່າກະຊວງ, ອໍານາດການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ອົງການຈັດຕັ້ງທີ່ນໍາໃຊ້ງົບປະມານຂອງລັດ ຊຶ່ງເປັນຜູ້ກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນໍາໃຊ້ຂອງຕົນ.

## ມາດຕາ 20: ສິດ ແລະ ໜ້າທີ່ຂອງກະຊວງການເງິນ

ກະຊວງການເງິນ ຊຶ່ງເປັນຜູ້ຕາງໜ້າລັດຖະບານມີສິດ ແລະ ໜ້າທີ່ ໃນການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດດັ່ງນີ້:

1. ຄົ້ນຄ້ວາລະບຽບການກ່ຽວກັບການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດເພື່ອນໍາສະເໜີລັດຖະບານພິຈາລະນາ;

2. ກວດກາການຂຶ້ນບັນຊີ ແລະ ການຂຶ້ນທະບຽນ ຊັບສິນຂອງລັດໃນຂອບເຂດທົ່ວປະເທດ;

3. ປະສານສົມທົບກັບຂະແໜງການອື່ນໆ ແລະ ອໍານາດການປົກຄອງທ້ອງຖິ່ນ ກ່ຽວກັບການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ;

4. ສະຫລຸບລາຍງານຜົນຂອງການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ໃຫ້ລັດຖະບານເປັນແຕ່ລະໄລຍະ;

5. ກໍ່ສ້າງ, ບໍາລຸງ ແລະ ຍົກລະດັບວິຊາການດ້ານການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ໃຫ້ແກ່ພະນັກງານ-ລັດຖະກອນທີ່ເຮັດວຽກງານກວດກາ;

6. ປະຕິບັດ ແລະ ໜ້າທີ່ອື່ນໆ ກ່ຽວກັບການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ມາດຕາ 21: ສິດ ແລະ ໜ້າທີ່ຂອງກະຊວງ, ອົງການທຽບເທົ່າກະຊວງ, ອໍານາດການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ອົງການຈັດຕັ້ງທີ່ນໍາໃຊ້ງົບປະມານຂອງລັດ.

ກະຊວງ, ອົງການທຽບເທົ່າກະຊວງ, ອໍານາດການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ອົງການຈັດຕັ້ງທີ່ນໍາໃຊ້ງົບປະມານຂອງລັດມີສິດ ແລະ ໜ້າທີ່ໃນການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດດັ່ງນີ້:

1. ກວດກາການຂຶ້ນບັນຊີ ແລະ ການຂຶ້ນທະບຽນຊັບສິນຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນໍາໃຊ້ຂອງຕົນ;

2. ກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ນໍາໃຊ້ຂອງຕົນ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ມາດຕາ 22: ການກວດກາການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ

ການກວດກາຊັບສິນຂອງລັດ ແມ່ນການຕິດຕາມກວດກາກ່ຽວກັບການຄຸ້ມຄອງ, ນໍາໃຊ້, ປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ຂອງອົງການຈັດຕັ້ງ ຫລື ບຸກຄົນທີ່ໄດ້ຮັບສິດໃນການຄຸ້ມຄອງ ແລະ ນໍາໃຊ້ ເພື່ອໃຫ້ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ແລະ ລະບຽບກົດໝາຍ.

ອົງການຈັດຕັ້ງ ຫລື ບຸກຄົນທີ່ຖືກກວດກາ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຕ້ອງໃຫ້ຄວາມຮ່ວມມືແກ່ພະນັກງານກວດກາຊັບສິນຂອງລັດ.

### ມາດຕາ 23: ປະເພດການກວດກາຊັບສິນຂອງລັດ

ການກວດກາຊັບສິນຂອງລັດມີ ສາມ ປະເພດດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ທີ່ຈະຖືກກວດກາ ຊາບລ່ວງໜ້າ;

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ທີ່ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາຊັບສິນຂອງລັດນັ້ນ ເຈົ້າໜ້າທີ່ກວດກາຊັບສິນຂອງລັດ ຕ້ອງປະຕິບັດ ໜ້າທີ່ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

### ມາດຕາ 24: ເນື້ອໃນຂອງການກວດກາ

ການກວດກາຊັບສິນຂອງລັດ ມີເນື້ອໃນຕົ້ນຕໍດັ່ງລຸ່ມນີ້:

1. ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການຕ່າງໆ, ຈຸດປະສົງ ແລະ ເປົ້າໝາຍ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ;
2. ການຈັດຕັ້ງປະຕິບັດຂໍ້ຜູກພັນ ແລະ ເນື້ອໃນອື່ນໆຂອງສັນຍາ ລວມທັງເອກະສານທີ່ພົວພັນກັບການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ;
3. ການຈັດຕັ້ງປະຕິບັດແຜນການ ກ່ຽວກັບການປົກປັກຮັກສາ, ພັດທະນາ ແລະ ປະສິດທິຜົນຂອງການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ;

## ໝວດທີ 6 ການແກ້ໄຂຂໍ້ຂັດແຍ່ງ, ນະໂຍບາຍຕໍ່ຜູ້ມີຜົນງານແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 25. ການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງກ່ຽວກັບຊັບສິນຂອງລັດ ມີສອງປະເພດ ຄື: ຂໍ້ຂັດແຍ່ງທີ່ມີລັກສະນະບໍລິຫານ ແລະ ຂໍ້ຂັດແຍ່ງທີ່ມີລັກສະນະທາງແພ່ງ ຫລື ທາງອາຍາ.

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຊັບສິນຂອງລັດ ທີ່ມີລັກສະນະບໍລິຫານ ເຊັ່ນ: ການຄອບຄອງ ແລະ ນໍາໃຊ້ຊັບສິນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ຫລື ລະ

ບຽບກົດໝາຍ ແມ່ນໜ້າທີ່ຂອງຂະແໜງການເງິນ ໂດຍສົມທົບກັບອໍານາດການປົກຄອງ ແລະ ອົງການທີ່ກ່ຽວຂ້ອງເປັນຜູ້ພິຈາລະນາແກ້ໄຂ.

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຊັບສິນຂອງລັດ ທີ່ມີລັກສະນະທາງແພ່ງ ຫລື ທາງອາຍາເຊັ່ນ: ການບໍ່ປະຕິບັດຕາມສັນຍາ, ການປອມແປງເອກະສານ ຫລື ການຍັກຍອກເອົາຊັບສິນຂອງລັດນັ້ນ ແມ່ນໜ້າທີ່ຂອງສານປະຊາຊົນເປັນຜູ້ພິຈາລະນາຕັດສິນ ຕາມລະບຽບກົດໝາຍ.

### ມາດຕາ26: ນະໂຍບາຍຕໍ່ຜູ້ມີຜົນງານ

ອົງການຈັດຕັ້ງ ຫລື ບຸກຄົນທີ່ຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ໂດຍຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ແລະ ລະບຽບກົດໝາຍ, ປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ຢ່າງມີປະສິດທິຜົນນັ້ນ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນໆ ຊຶ່ງລັດຖະບານເປັນຜູ້ກໍານົດ.

### ມາດຕາ 27: ມາດຕະການຕໍ່ຜູ້ລະເມີດ

ອົງການຈັດຕັ້ງ ຫລື ບຸກຄົນ ທີ່ໄດ້ລະເມີດລະບຽບ ແລະ ກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການຕັກເຕືອນ, ສຶກສາອົບຮົມ, ຮັບຜິດຊອບທາງແພ່ງ ຫລື ລົງໂທດທາງອາຍາຕາມແຕ່ລະກໍລະນີເບົາ ຫລື ໜັກ.

ນອກຈາກໂທດຕົ້ນຕໍ ທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ຜູ້ກະທໍາຜິດອາດຈະໄດ້ຮັບໂທດເພີ້ມເຊັ່ນ: ຖືກໂຈະການໃຫ້ອະນຸຍາດດໍາເນີນທຸລະກິດ, ຖອນໃບອະນຸຍາດນໍາໃຊ້ຊັບສິນຂອງລັດ ຫລື ຮິບພາຫະນະ ແລະ ອຸປະກອນທີ່ນໍາໃຊ້ເຂົ້າໃນການກະທໍາຜິດ.

### ມາດຕາ 28: ມາດຕະການຕັກເຕືອນ ແລະ ສຶກສາອົບຮົມ

ອົງການຈັດຕັ້ງ ຫລື ບຸກຄົນໃດ ຫາກໄດ້ລະເມີດກົດໝາຍສະບັບນີ້ ທີ່ມີລັກສະນະເບົາ ເຊັ່ນ: ຄອບຄອງ, ນໍາໃຊ້ຊັບສິນຂອງລັດໂດຍບໍ່ໄດ້ຮັບອະນຸຍາດ, ປົກປັກຮັກສາ ຫລື ພັດທະນາຊັບສິນຂອງລັດ ບໍ່ຖືກຈຸດປະສົງ, ເປົ້າໝາຍ ຫລື ລະບຽບກົດໝາຍ ຊຶ່ງບໍ່ມີຜົນເສຍຫາຍຢ່າງຫລວງຫລາຍນັ້ນ ຈະຖືກຕັກເຕືອນ, ສຶກສາອົບຮົມ ແລະ ໃຫ້ຢຸດເຊົາການລະເມີດດັ່ງກ່າວ.

### ມາດຕາ 29: ມາດຕະການໃຊ້ແທນຄ່າເສຍຫາຍ

ອົງການຈັດຕັ້ງ ຫລື ບຸກຄົນ ທີ່ໄດ້ເຮັດໃຫ້ຊັບສິນຂອງລັດເປ່ເພ ຫລື ເສຍຫາຍຍ້ອນລະເມີດລະບຽບກົດໝາຍ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 30: ມາດຕະການທາງອາຍາ

ບຸກຄົນໃດ ທີ່ໄດ້ກະທໍາຜິດທາງອາຍາຕໍ່ຊັບສິນຂອງລັດເຊັ່ນ: ປອມແປງເອກະສານ, ລັກ, ສໍ້ໂກງ, ຍັກຍອກ, ທໍາລາຍຊັບສິນຂອງລັດ, ຂຸດຄົ້ນ ຫລື ເຄື່ອນຍ້າຍຊັບພະຍາກອນທໍາມະຊາດໂດຍບໍ່ຖືກຕ້ອງຕາມກົດໝາຍນັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງສາມາດຢຶດ ຫລື ອາຍັດ ຊັບສິນດັ່ງກ່າວໄວ້ ເພື່ອດໍາເນີນຄະດີ ຕາມລະບຽບກົດໝາຍ.

ພະນັກງານ ຫລື ລັດຖະກອນ ທີ່ໄດ້ເປີດເຜີຍຄວາມລັບທາງລັດຖະການ ກ່ຽວກັບຊັບສິນຂອງລັດ ຈະຖືກປະຕິບັດວິໄນ ຫລື ຈະຖືກລົງໂທດຕາມກົດໝາຍ. ໃນກໍລະນີທີ່ມີການກະທໍາຜິດເຊັ່ນ: ການສວຍໃຊ້ໜ້າທີ່ຕໍາແໜ່ງ, ໃຊ້ອໍານາດເກີນຂອບເຂດ, ຮັບສິນບົນ, ເກັບລາຍຮັບແລ້ວບໍ່ຖອກເຂົ້າຄັງເງິນຂອງລັດ ດ້ວຍຮູບການໃດໜຶ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫລື ບຸກຄົນ ຈະຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫລື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທັງໝົດທີ່ຕົນໄດ້ກໍ່ຂຶ້ນ.

## ໝວດທີ 7 ບົດບັນຍັດສຸດທ້າຍ

### ມາດຕາ 31: ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 32: ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງ ທົກສິບ ວັນນັບແຕ່ມື້ປະທານປະເທດແຫ່ງ ສປປ ລາວ ອອກລັດຖະດໍາລັດ ປະກາດໃຊ້ເປັນຕົ້ນໄປ.

ທຸກຂໍ້ກໍານົດ ແລະ ບົດບັນຍັດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ